ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ມາດຕະການແກ້ໄຂທະນາຄານທຸລະກິດ ທີ່ຢູ່ໃນພາວະວິກິດ

ຮຽນ ທ່ານຜູ້ອ່ານ ທີ່ນັບຖື ແລະ ຮັກແພງ! ໃນການແກ້ໄຂທະນາຄານທຸລະກິດ ທີ່ຕົກຢູ່ໃນພາວະວິກິດນັ້ນ ແມ່ນເປັນບັນຫາສຳຄັນທີ່ສຸດ ເພື່ອເຮັດໃຫ້ທະນາຄານທຸລະກິດຫຼຸດພົ້ນຈາກພາວະວິກິດທີ່ກຳລັງປະເຊີນຢູ່ ຊຶ່ງໃນການແກ້ໄຂດັ່ງກ່າວ ແມ່ນເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການດຳເນີນງານທີ່ສຳຄັນ ຂອງທະນາຄານທຸລະກິດ, ຫຼີກລ່ຽງຜົນກະທົບຕໍ່ຕະຫຼາດການເງິນ ໂດຍສະເພາະການສະກັດກັ້ນການແຜ່ລາມຂອງຜົນກະທົບດັ່ງກ່າວ ແລະ ເພື່ອຮັກສາວິໄນຕະຫຼາດ, ປົກປ້ອງຊັບສິນຂອງຜູ້ຝາກເງິນ ແລະ ເຈົ້າໜີ້. ສະນັ້ນ, ທະນາຄານແຫ່ງ ສປປ ລາວ ຕ້ອງນຳໃຊ້ມາດຕະການທີ່ເໝາະສົມ ໃນການແກ້ໄຂທະນາຄານທຸລະກິດດັ່ງກ່າວ. ຊຶ່ງຄັ້ງນີ້ຈະສືບຕໍ່ນຳສະເໜີກ່ຽວກັບມາດຕະການແກ້ໄຂທະນາຄານທຸລະກິດ ທີ່ຢູ່ໃນພາວະວິກິດວ່າມີຄືແນວໃດໃຫ້ໄດ້ຮັບຊາບ.

ມາດຕະການແກ້ໄຂທະນາຄານທຸລະກິດ ທີ່ຢູ່ໃນພາວະວິກິດ ແມ່ນຂະບວນການດຳເນີນການແກ້ໄຂທະນາຄານທຸລະກິດທີ່ຕົກຢູ່ໃນພາວະວິກິດທີ່ມີຖານະການເງິນອ່ອນແອ ແລະ ຂາດຄວາມໝັ້ນຄົງ ພາຍຫຼັງທີ່ໄດ້ດຳເນີນມາດຕະການແຕ່ຫົວທີໄປແລ້ວ ແຕ່ບໍ່ປະສົບຜົນສຳເລັດ ໂດຍການນຳໃຊ້ມາດຕະການແກ້ໄຂຢ່າງເໝາະສົມ ເປັນຕົ້ນແມ່ນມາດຕະການເຂົ້າຄວບຄຸມ ແລະ ມາດຕະການຟື້ນຟູທະນາຄານທຸລະກິດ. ຊຶ່ງກ່ອນທີ່ຈະເຂົ້າໄປດຳເນີນການນຳໃຊ້ມາດຕະການແກ້ໄຂທະນາຄານທຸລະກິດທີ່ຕົກຢູ່ໃນພາວະວິກິດໄດ້ນັ້ນທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະຄວບຄຸມ ເພື່ອເຂົ້າໄປແກ້ໄຂທະນາຄານທຸລະກິດດັ່ງກ່າວ ຕາມແຕ່ລະກໍລະນີ. ໂດຍຄະນະຄວບຄຸມມີສິດນຳໃຊ້ມາດຕະການຕາມກົດໝາຍກຳນົດດັ່ງນີ້:

ອີງຕາມ ພາກທີ VI, ໝວດທີ 2, ມາດຕາ 79 ມາດຕະການແກ້ໄຂທະນາຄານທຸລະກິດ ທີ່ຕົກຢູ່ໃນພາວະວິກິດ ຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ, ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018 (ສະບັບປັບປຸງ) ໄດ້ກຳນົດ ມາດຕະການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ປະກອບມີ 2 ມາດຕະການ ຄື: ມາດຕະການເຂົ້າຄວບຄຸມ ແລະ ມາດຕະການຟື້ນຟູ. ແຕ່ລະມາດຕະການມີເນື້ອໃນ ດັ່ງນີ້:

1. ມາດຕະການຄວບຄຸມ
   - ສັ່ງໃຫ້ປິດ, ຍົກເລີກ ຫຼື ສືບຕໍ່ການປະຕິບັດສັນຍາທາງການເງິນ ຫຼື ສັນຍາອະນຸພັນທາງດ້ານການເງິນ;
   - ເລື່ອນ, ໂຈະ ການຊຳລະໜີ້ຂອງທະນາຄານທຸລະກິດແກ່ເຈົ້າໜີ້ ຖ້າເຫັນວ່າສັນຍາບໍ່ຖືກຕ້ອງ;
   - ຮຽກເກັບຊັບສິນຂອງທະນາຄານທຸລະກິດທີ່ຢູ່ໃນພະວະວິກິດ ນຳບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ທະນາຄານທຸລະກິດອື່ນ;
   - ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສະໜອງຂໍ້ມູນ;
   - ນຳໃຊ້ມາດຕະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ຂອງທະນາຄານ ແຫ່ງ ສປປ ລາວ.
2. ມາດຕະການຟື້ນຟູ
   - ຊີ້ນຳສະພາບໍລິຫານ, ຜູ້ບໍລິຫານຂອງທະນາຄານທຸລະກິດ ເພື່ອສ້າງ ແລະ ຈັດຕັ້ງປະຕິບັດແຜນຟື້ນຟູ;
   - ສັ່ງໃຫ້ຜູ້ບໍລິຫານ ປົດຕຳແໜ່ງພະນັກງານທີ່ລະເມີດ ລະບຽບກົດໝາຍ ຫຼື ບໍ່ຈັດຕັ້ງປະຕິບັດແຜນຟື້ນຟູ;

- ສັ່ງໃຫ້ຢຸດເຊົາການເຄື່ອນໄຫວຕ່າງໆ ຂອງທະນາຄານທຸລະກິດ ທີ່ບໍ່ສອດຄ່ອງກັບແຜນຟື້ນຟູ ແລະ ການເຄື່ອນໄຫວທີ່ສ້າງຜົນເສຍຫາຍແກ່ທະນາຄານທຸລະກິດ;
- ປັບປຸງ, ປ່ຽນແທນສະພາບໍລິຫານ ແລະ ຜູ້ບໍລິຫານ ເພື່ອໃຫ້ບັນລຸແຜນຟື້ນຟູ;
- ສັ່ງໃຫ້ເພີ່ມທຶນຈົດທະບຽນ ຫຼື ຄວບກິດຈະການກັບທະນາຄານທຸລະກິດອື່ນ;
- ປັບປຸງຮູບແບບວິສາຫະກິດ ຂອງທະນາຄານທຸລະກິດ;
- ນຳໃຊ້ມາດຕະການອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຂອງທະນາຄານ ແຫ່ງ ສປປ ລາວ.

ໃນກໍລະນີຈຳເປັນ ທະນາຄານແຫ່ງ ສປປ ລາວ ມີສິດນຳໃຊ້ມາດຕະການດັ່ງກ່າວ ຕໍ່ບໍລິສັດໃນກຸ່ມຂອງທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ໂດຍປະສານກັບພາກສ່ວນທີ່ກ່ຽວຂ້ອງ ທີ່ຄຸ້ມຄອງບໍລິສັດໃນກຸ່ມນັ້ນ.

ນັ້ນແມ່ນມາດຕະການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ) ໄດ້ກຳນົດ ຊຶ່ງໃນການແກ້ໄຂວຽກງານດັ່ງກ່າວ ຄະນະຄວບຄຸມທີ່ເຂົ້າໄປດຳເນີນການຕ້ອງໄດ້ເອົາໃຈໃສ່ເກັບກຳຂໍ້ມູນຕ່າງໆ ໃນການເຄື່ອນໄຫວດຳເນີນທຸລະກິດ ຂອງທະນາຄານທຸລະກິດໄລຍະຜ່ານມາຢ່າງລະອຽດ, ປະຕິບັດມາດຕະການຟື້ນຟູຢ່າງຖືກຕ້ອງຕາມແບບແຜນ ແລະ ຮັດກຸມເມື່ອເຫັນວ່າທະນາຄານດັ່ງກ່າວສາມາດຟື້ນຟູໄດ້.

**# ບົດຄວາມໂດຍ: ວັນນະສິດ ສິດທິລາດວົງສາ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ**